**Curriculum on Basic Skills in legal profession**
**for enforcement and court judgement (Laos)**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 7
## Rules, regulations and laws
## ດ້ານກົດໝາຍ ແລະ ລະບຽບການ

### 1.ບົດບາດໃນການສ້າງຄວາມສັກສິດຂອງກົດໝາຍ

ລັດຖະບານຍາມໃດກໍ່ຖືເອົາການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລະບຽບກົດໝາຍ. ສະນັ້ນ, ການປະຕິບັດຄໍາຕັດສິນຂອງສານ ກໍ່ຍິ່ງມີຄວາມຈໍາເປັນຕ້ອງມີນິຕິກໍາເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ແລະ ຍຸຕິທໍາ, ສປປ ລາວ ມີກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ສະບັບທໍາອິດປີ 2004 ແລະ ໄດ້ຮັບການປັບປຸງໃນປີ 2008, ນອກຈາກນັ້ນ ສປປ ລາວ ຍັງມີບັນດານິຕິກໍາປີ່ນອ້ອມ ເພື່ອເປັນພື້ນຖານໃນການຈັດຕັ້ງປະຕິບັດໃນແຕ່ະໄລຍະ ເປັນຕົ້ນແມ່ນ: ດໍາລັດເລກທີ 158/ລບ, ລົງວັນທີ 4 ມິຖຸນາ 2013 ວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ, ບັນດາຄໍາແນະນໍາຂອງລັດຖະມົນຕີກະຊວງຍຸຕິທໍາ....

ກົດໝາຍການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ ມີບົດບາດສໍາຄັນໃຫ້ແກ່ອົງການປະຕິບັດຄໍາຕັດສິນຂອງສານ ໃຊ້ເປັນເຄື່ອງມືໃນການປະຕິບັດຄໍາຕັດສິນຂອງສານ ຊຶ່ງໃນເວລາປະຕິບັດຄໍາຕັດສິນຂອງສານ ໝາກຜົນຂອງການຈັດຕັ້ງປະຕິບັດ ຈະສະແດງໃຫ້ເຫັນຜົນສັກສິດຂອງກົດໝາຍ.

ການປະຕິບັດຄໍາຕັດສິນຂອງສານ ແມ່ນການສະແດງອອກເຖິງຄວາມສັກສິດ ແລະ ຄວາມເຂັ້ມແຂງຂອງອໍານາດລັດທີ່ເປັນອໍານາດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນໃນສັງຄົມ ປະຊາຊົນເປັນຜູ້ສ້າງຕັ້ງອົງການຕົວແທນແຫ່ງສິດອໍານາດ ແລະ ຜົນປະໂຫຍດຂອງຕົນຊຶ່ງມີຊື່ວ່າສະພາແຫ່ງຊາດ ການເລືອກຕັ້ງສະມາຊິກສະພາແຫ່ງຊາດແມ່ນປະຕິບັດຕາມຫຼັກການທົ່ວໄປ, ສະເໝີພາບ, ໂດຍກົງແລະລົງຄະແນນສຽງປິດລັບ, ຜູ້ປ່ອນບັດເລືອກຕັ້ງມີສິດສະເໜີປົດຜູ້ແທນຂອງຕົນໄດ້ຖ້າຫາກວ່າມີການປະພຶດທີ່ບໍ່ສົມກຽດສັກສີ ແລະຂາດຄວາມໄວ້ໄວ້ວາງໃຈຈາກປະຊາຊົນ. ໃນເມື່ອປະຊາຊົນໄດ້ສ້າງຕັ້ງອົງການຕົວແທນແຫ່ງສິດອໍານາດຂອງຕົນແລ້ວແລະເພື່ອຮັບປະກັນຄວາມເປັນເອກະພາບໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມສະພາແຫ່ງຊາດຈຶ່ງໄດ້ຄົ້ນຄວ້າສ້າງກົດໝາຍເພື່ອເປັນເຄື່ອງມືໃນການດັດປັບສາຍພົວພັນສັງຄົມໃນຫຼາຍໂຂງເຂດຫຼືໂຂງເຂດໃດໜຶ່ງແລະມີຜົນບັງຄັບປະຕິບັດຢ່າງສະເໝີພາບໃນທົ່ວປະເທດ.

ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ແມ່ນໜຶ່ງໃນລະບົບນິຕິກໍາທີ່ມີຜົນບັງຄັບທົ່ວໄປຊຶ່ງກໍານົດຫຼັກການ, ລະບຽບການ, ວິທີການແລະມາດຕະການກ່ຽວກັບການປະຕິບັດຄໍາຕັດສິນຂອງສານທາງແພ່ງ; ກໍານົດທີ່ຕັ້ງ, ພາລະບົດບາດ, ສິດແລະໜ້າທີ່ຂອງອົງການຄຸ້ມຄອງແລະອົງການປະຕິບັດຄໍາຕັດສິນຂອງສານແຕ່ສູນກາງລົງຮອດທ້ອງຖິ່ນລວມທັງສິດ ແລະໜ້າທີ່ຂອງພະນັກງານປະຕິບັດຄໍາຕັດສິນຂອງສານແນໃສ່ເຮັດໃຫ້ຄໍາຕັດສິນຂອງສານໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ຖືກຕ້ອງ, ວ່ອງໄວແລະເປັນເອກພພາບໃນທົ່ວປະເທດ; ເພີ່ມທະວີຄວາມສັກສິດຂອງ

ອຳນາດລັດແລະຂອງກົດໝາຍ; ປົກປ້ອງສິດແລະຜົນປະໂຫຍດຂອງລັດ, ສິດແລະຜົນປະໂຫຍດອັນຊອບທຳຂອງລວມໝູ່ແລະຂອງພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍແລະມີຄວາມຍຸຕິທຳ. ພ້ອມກັນນີ້, ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານກໍໄດ້ມອບຄວາມຮັບຜິດຊອບໃຫ້ກະຊວງຍຸຕິທຳເປັນຜູ້ປະຕິບັດຄຳຕັດສິນຂອງສານທາງແພ່ງຊຶ່ງກະຊວງຍຸຕິທຳກໍແມ່ນອົງການຈັດຕັ້ງໜຶ່ງຊຶ່ງເປັນອົງການຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນ. ສະນັ້ນ, ການປະຕິບັດຄຳຕັດສິນຂອງສານກໍແມ່ນການປະຕິບັດສິດແລະໜ້າທີ່ອັນໜຶ່ງທີ່ປະຊາຊົນມອບໝາຍໃຫ້ເພື່ອປົກປ້ອງສິດແລະຜົນປະໂຫຍດອັນຊອບທຳຂອງປະຊາຊົນບັນດາເຜົ່າແລະຊັ້ນຄົນໃນສັງຄົມ. ຖ້າຫາກອົງການປະຕິບັດຄຳຕັດສິນຂອງສານມີຄວາມໜັກແໜ້ນເຂັ້ມແຂງ, ສາມາດນຳເອົາຄຳຕັດສິນ, ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດມາຈັດຕັ້ງປະຕິບັດໃຫ້ມີຄວາມຖືກຕ້ອງ, ເຂັ້ມງວດ, ສັກສິດ, ມີຄຸນນະພາບກໍຈະເປັນການຍົກສູງບົດບາດ, ຄວາມເຂັ້ມແຂງຂອງອຳນາດລັດທີ່ເປັນອຳນາດຂອງປະຊາຊົນແລະຄວາມສັກສິດໃນການຄຸ້ມຄອງລັດດ້ວຍກົດໝາຍຂອງປະຊາຊົນ.

ໃນໄລຍະແຕ່ນີ້ຮອດປີ 2025 ພັກ ແລະ ລັດເຮົາໄດ້ວາງຄາດໝາຍສູ້ຊົນລວມໄວ້ວ່າໃຫ້ປະເທດຊາດຫຼຸດພົ້ນຈາກການເປັນປະເທດດ້ອຍພັດທະນາ, ລຶບລ້າງຄວາມທຸກຍາກ, ທັນເຂົ້າສູ່ອາຊີບຄົງທີ່, ພ້ອມກັນນີ້ກໍຕ້ອງຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມເປັນເອກະລາດ ອຳນາດອະທິປະໄຕຂອງຊາດໄວ້ໃຫ້ໝັ້ນຄົງ, ສະນັ້ນ ເພື່ອໃຫ້ບັນລຸວິໄສທັດກ່ຽວກັບການພັດທະນາກົດໝາຍທີ່ວ່າ: ພັດທະນາລະບົບກົດໝາຍທີ່ເປັນເອກະພາບ, ກົມກຽວ, ຈະແຈ້ງ, ເຊື່ອຖືໄດ້, ຄາດຄະເນໄດ້, ມີຄຸນະພາບ, ຍຸຕິທຳ, ທຸກຄົນສາມາດເຂົ້າເຖິງໄດ້ ໂດຍຜ່ານຂະບວນການສ້າງທີ່ໂປ່ງໃສ ແລະ ມີສ່ວນຮ່ວມຂອງປະຊາຊົນ, ໃນຄວາມຕ້ອງການອັນຈຳເປັນກ່ຽວກັບການພັດທະນາກົດໝາຍ ຈຶ່ງໄດ້ກຳນົດວັດຖຸປະສົງ ແລະ ວາງຈຸດໝາຍລວມແຕ່ນີ້ຮອດປີ 2025 ດັ່ງນີ້:

ພັກ ແລະ ລັດຖະບານໄດ້ກຳນົດກ່ຽວກັບການປະຕິບັດຄຳຕັດສິນຂອງສານ ໄວ້ໃນລັດຖະທຳມະນູນວ່າ: " ຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງທຸກຄົນຕ້ອງເຄົາລົບ, ບຸກຄົນ ແລະ ອົງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງຕ້ອງປະຕິບັດຢ່າງເຂັ້ມງວດ" ຈາກເນື້ອໃນດັ່ງກ່າວຈຶ່ງໄດ້ຈັດຕັ້ງຜັນຂະຫຍາຍກາຍມາເປັນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງມາດຕາ 5 ຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສາທີ່ກຳນົດວ່າ: ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດ ບຸກຄົນ, ອົງການຈັດຕັ້ງທີ່ກ່ຽວຂ້ອງຕ້ອງປະຕິບັດຢ່າງເຂັ້ມງວດ ພ້ອມກັນນັ້ນທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະ  ພົນລະເມືອງທຸກຄົນຕ້ອງເຄົາລົບ ແລະ ມີພັນທະໃຫ້ການຮ່ວມມື, ຊ່ວຍເຫຼືອອັນຈຳເປັນແກ່ພະນັກງານປະຕິບັດຄຳຕັດສິນຂອງສານ. ທັງໝົດນັ້ນມີຈຸດປະສົງດຽວກັນຄືການນຳເອົາແນວທາງຍຸຕິທຳຂອງພັກໄປຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ, ເພື່ອໃຫ້ປະຊາຊົນທຸກຊັ້ນຄົນໄດ້ຮັບຄວາມຖືກຕ້ອງ, ເປັນທຳ ຈາກການດຳເນີນຄະດີຕາມຂະບວນຍຸຕິທຳ ແລະ ເພື່ອເພີ່ມທະວີຄວາມສັກສິດຂອງອຳນາດລັດ ແລະ ຂອງກົດໝາຍ, ປົກປ້ອງສິດ, ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມຍຸຕິທຳ.

ການປະຕິບັດຄຳຕັດສິນຂອງສານ ເປັນວຽກງານສຸດທ້າຍຂອງຂະບວນຍຸຕິທຳ, ເປັນວຽກງານທີ່ພົບຄວາມຫຍຸ້ງຍາກ, ສັບສົນເນື່ອງຈາກເປັນການຈັດຕັ້ງປະຕິບັດທີ່ມີຜົນກະທົບໂດຍກົງ ແລະ ເຊິ່ງໜ້າ, ແມ່ນການປະຕິບັດທີ່ແຕະຕ້ອງເຖິງສິດ, ກຳມະສິດ, ຊື່ສຽງ, ກຽດສັກສີ ແລະ ຜົນປະໂຫຍດຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ, ດັ່ງນັ້ນ, ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ແມ່ນມີຜົນສັກສິດ, ມີຄຸນຄ່າທາງກົດໝາຍ ແລະ ມີຄວາມຈຳເປັນຈະຕ້ອງໄດ້ປະຕິບັດ, ຖ້າອົງການຈັດຕັ້ງປະຕິບັດຫາກບໍ່ເຂັ້ມແຂງ ການປະຕິບັດຫາກຍັງຖືກແຊກແຊງທາງກົງ ຫຼື ທາງອ້ອມ ຫຼື ພາກສ່ວນອື່ນສະແດງເຈດຕະນາບໍ່ໃຫ້ຄວາມຮ່ວມມືກັບພະນັກງານປະຕິບັດຄຳຕັດສິນຂອງສານແລ້ວກໍຈະເຮັດໃຫ້ນິຕິກຳເຫຼົ່ານັ້ນບໍ່ມີຄວາມໝາຍ ແລະ ບໍ່ມີຄຸນຄ່າແຕ່ຢ່າງໃດ, ແນ່ນອນກໍຈະຕ້ອງສົ່ງຜົນກະທົບອັນບໍ່ດີເຖິງຂະບວນການຍຸຕິທຳຢ່າງຫຼີກລ້ຽງບໍ່ໄດ້.

**2.ການຮ່ວມມືຂອງທຸກພາກສ່ວນໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ**

ເພື່ອຮັບປະກັນໃຫ້ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໄດ້ຮັບການເອົາໃຈໃສ່ຈັດຕັ້ງປະຕິບັດຢ່າງທັນການ, ເປັນເອກະພາບ, ມີປະສິດທິພາບ ແລະ ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍນາຍົກລັດຖະມົນຕີໄດ້ອອກຄຳສັ່ງເລກທີ 38/ນຍ, ລົງວັນທີ 06/11/2006 ກ່ຽວກັບການປະຕິບັດຄຳຕັດສິນຂອງສານຈະຕ້ອງໄດ້ເອົາໃຈໃສ່ດັ່ງນີ້ :

1) ໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການອ້ອມຂ້າງລັດຖະບານ, ບັນດາທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນເຄົາລົບ ແລະ ປະຕິບັດຕາມມາດຕາ 85 ຂອງລັດຖະທຳມະນູນແຫ່ງ ສປປ ລາວ ຢ່າງເຂັ້ມງວດໂດຍຖືວ່າການເຄົາລົບ ແລະ ການຊຸກຍູ້ການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ແມ່ນຂະບວນການສ້າງສັງຄົມໃຫ້ມີຄວາມຍຸຕິທຳ ແລະ ສີວິໄລ ທັງແມ່ນຄວາມຮັບຜິດຊອບ ແລະ ພັນທະຂອງທຸກໆອົງການຈັດຕັ້ງການເມືອງ-ສັງຄົມ ແລະ ພົນລະເມືອງທຸກຄົນ.

2) ໃຫ້ອຳນາດການປົກຄອງແຂວງ, ນະຄອນຫຼວງ ແລະ ເມືອງ, ເທດສະບານຮ່ວມມື ແລະ ອຳນວຍຄວາມສະດວກໃນການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດໃຫ້ມີຄວາມສັກສິດ ເພື່ອໃຫ້ຮັບປະກັນທາດແທ້ອັນດີງາມຂອງອຳນາດລັດ ຂອງພວກເຮົາທີ່ເປັນອຳນາດຂອງປະຊາຊົນ, ໂດຍປະຊາຊົນ ເພື່ອປະໂຫຍດຂອງປະຊາຊົນບັນດາເຜົ່າ.

3) ໃຫ້ອຳນາດການປົກຄອງແຂວງ, ນະຄອນຫຼວງ ແລະ ເມືອງ, ເທດສະບານ ເອົາໃຈໃສ່ປັບປຸງອົງການຍຸຕິທຳ ແລະ ອົງການປະຕິບັດຄຳຕັດສິນຂອງສານ ຢູ່ຂັ້ນແຂວງ, ນະຄອນຫຼວງ ແລະ ເມືອງ, ເທດສະບານ ທີ່ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ປອດໃສ ໃຫ້ແຕ່ງຕັ້ງພະນັກງານຂອງຕົນເປັນຜູ້ຮັບຜິດຊອບ, ຄຸ້ມຄອງ, ຕິດຕາມ ແລະ ຊີ້ນຳວຽກງານກົດໝາຍ ແລະ ວຽກງານຍຸຕິທຳ ເປັນຕົ້ນແມ່ນໃຫ້ເອົາໃຈໃສ່ຕິດຕາມ ແລະ ຮັບປະກັນວຽກງານປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນໃຫ້ມີຜົນສັກສິດ, ຖ້າມີບັນຫາຫຍຸ້ງຍາກເກີດຂຶ້ນໃນການປະຕິບັດຄຳຕັດສິນຂອງສານ ກໍໃຫ້ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕ່າງໆ ເພື່ອຊອກຫາ ແລະ ດຳເນີນວິທີການແກ້ໄຂໃຫ້ຂາດຕົວໃຫ້ກະຊວງຍຸຕິທຳ, ກະຊວງປ້ອງກັນຄວາມສະຫງົບ ແລະ ອົງການທີ່ກ່ຽວຂ້ອງ ຈົ່ງເພີ່ມທະວີປະສານສົມທົບໃນການປະຕິບັດຄຳຕັດສິນຂອງສານ ໃຫ້ເຂັ້ມງວດ ແລະ ມີປະສິດທິຜົນ.

4) ໃຫ້ທຸກຂະແໜງການ, ອົງການ ແລະ ອຳນາດການປົກຄອງທ້ອງຖິ່ນ ເອົາໃຈໃສ່ສຶກສາອົບຮົມ ແລະ ໂຄສະນາເຜີຍແຜ່ກົດໝາຍຢ່າງກວ້າງຂວາງໃຫ້ທົ່ວເຖິງ ເພື່ອເຮັດໃຫ້ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນ

ຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ປະຕິບັດຢ່າງຖືກຕ້ອງ ແນໃສ່ປະກອບສ່ວນເຮັດໃຫ້ການປະຕິບັດຄຳຕັດສິນຂອງສານ ໄດ້ຮັບການປະຕິບັດເປັນຢ່າງດີ.

5) ໃຫ້ກະຊວງຍຸຕິທຳ ເອົາໃຈໃສ່ສົມທົບກັບບັນດາຂະແໜງການ, ອົງການ ແລະ ທ້ອງຖິ່ນຈັດຕັ້ງ ການໂຄສະນາເຜີຍແຜ່ກົດໝາຍໃນທາງເລິກ ແລະ ທາງກວ້າງ ເປັນຕົ້ນແມ່ນເອົາໃຈໃສ່ຄຸ້ມຄອງການຈັດພິມກົດໝາຍໃຫ້ພຽງພໍ ເພື່ອຈຳໜ່າຍແຈກຢາຍໃຫ້ທົ່ວເຖິງດ້ວຍຮູບການທີ່ຫຼາກຫຼາຍ ແລະ ອຸດົມຮັ່ງມີໃນການໂຄສະນາເຜີຍກົດໝາຍໃນໝູ່ພະນັກງານ ແລະ ປະຊາຊົນ, ຕິດຕາມຊີ້ນຳຢ່າງໃກ້ຊິດບັນດາອົງການຍຸຕິທຳທ້ອງຖິ່ນ ກ່ຽວກັບວຽກງານໂຄສະນາເຜີຍແຜ່ກົດໝາຍ ເພື່ອເຮັດໃຫ້ພະນັກງານ ໂດຍສະເພາະພະນັກງານທີ່ມີສິດອຳນາດໃນການແກ້ໄຂຄະດີມີຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ນຳໃຊ້ກົດໝາຍ ໃຫ້ຖືກຕ້ອງເຂົ້າໃນການແກ້ໄຂຄະດີ, ເຊິ່ງຈະເຮັດໃຫ້ການປະຕິບັດຄຳຕັດສິນຂອງສານ ມີຄວາມສະດວກກວ່າເກົ່າ.

6) ໃນກໍລະນີພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ ຫຼື ສະມາຊິກຄອບຄົວ, ຍາດພີ່ນ້ອງຫາກຖືກສານຕັດສິນ ໃຫ້ໃຊ້ແທນຄ່າເສຍຫາຍ ຫຼື ຮັບໂທດ, ເຊິ່ງຄຳຕັດສິນຂອງສານ ກໍໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ກໍໃຫ້ເປັນເຈົ້າການສຶກສາອົບຮົມ ແລະ ແນະນຳຜູ້ກ່ຽວໃຫ້ເຄົາລົບ ແລະ ຍິນຍອມປະຕິບັດຕາມຄຳຕັດສິນຂອງສານຢ່າງຖືກຕ້ອງ.

7) ໃນກໍລະນີຂະແໜງການ, ອົງການ ຫຼື ອົງການປົກຄອງທ້ອງຖິ່ນ ໄດ້ຮັບການຮ້ອງຂໍຄວາມເປັນທຳທີ່ກ່ຽວກັບຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ແຕ່ຫາກເຫັນວ່າມີອັນບໍ່ຖືກຕ້ອງສອດຄ່ອງກັບກົດໝາຍ ຫຼື ເຫັນວ່າພະນັກງານປະຕິບັດຄຳຕັດສິນຂອງສານ ໄດ້ຈັດຕັ້ງປະຕິບັດບໍ່ຖືກຕ້ອງຕາມຄຳຕັດສິນຂອງສານ ຫຼື ບໍ່ສອດຄ່ອງກັບສະພາບຕົວຈິງນັ້ນ, ກໍໃຫ້ສະເໜີຕໍ່ລັດຖະມົນຕີວ່າການກະຊວງຍຸຕິທຳ ຫຼື ອົງການໄອຍະການປະຊາຊົນສູງສຸດ ເພື່ອພິຈາລະນາຫ້າມບໍ່ໃຫ້ພາກສ່ວນອື່ນສັ່ງໂຈະການປະຕິບັດຄຳຕັດສິນຂອງສານ ຕາມລຳພັງໃຈຢ່າງບໍ່ຖືກຕ້ອງຕາມລະບຽບກົດໝາຍ.

8) ມອບໃຫ້ກະຊວງຍຸຕິທຳ ແລະ ກະຊວງປ້ອງກັນຄວາມສະຫງົບ ຄຸ້ມຄອງ, ຕິດຕາມຊຸກຍູ້ ແລະ ຊີ້ນຳອົງການຈັດຕັ້ງ, ພະນັກງານ ແລະ ເຈົ້າໜ້າທີ່ທ້ອງຖິ່ນ ທີ່ຮັບຜິດຊອບການປະຕິບັດຄຳຕັດສິນຂອງສານ. ສຶກສາອົບຮົມ ແລະ ຍົກລະດັບທາງດ້ານວິຊາການ, ດ້ານຄຸນສົມບັດ ແລະ ຈັນຍາທຳ ໂດຍສະເພາະແມ່ນດ້ານຄວາມໂປ່ງໃສ, ຄວາມຮັບຜິດຊອບ ແລະ ຄວາມສັດຊື່ໃນການປະຕິບັດວຽກງານ ຫຼີກເວັ້ນການເຂົ້າຂ້າງອອກຂາ ເພື່ອຫາຜົນປະໂຫຍດໃສ່ຕົວທີ່ຈະພາໃຫ້ການປະຕິບັດຄຳຕັດສິນຂອງສານ ຊັກຊ້າ, ບໍ່ໄປບໍ່ມາ ແລະ ຂາດຄວາມຍຸຕິທຳ, ໃຫ້ອົງການປົກຄອງທ້ອງຖິ່ນເອົາໃຈໃສ່ຄຸ້ມຄອງບຳລຸງ ແລະ ສ້າງຖັນແຖວພະນັກງານປະຕິບັດຄຳຕັດສິນຂອງສານໃຫ້ມີທັດສະນະການເມືອງໜັກແໜ້ນ. ມີລະດັບຄວາມສາມາດປະຕິບັດຕົວຈິງ ຈັດວາງສັບຊ້ອນພະນັກງານຫຼັກແຫຼ່ງ, ມີຄວາມສາມາດ ເພື່ອຮັບຜິດຊອບວຽກງານດັ່ງກ່າວ.

9) ໃຫ້ເອົາໃຈໃສ່ຕິດຕາມ, ຊ່ວຍເຫຼືອພະນັກງານປະຕິບັດຄຳຕັດສິນຂອງສານ ປະຕິບັດນະໂຍບາຍຢ່າງ ເໝາະສົມຕໍ່ຜູ້ມີຜົນງານໃນການຈັດຕັ້ງປະຕິບັດ ແລະ ຜູ້ສະໜັບສະໜູນຊ່ວຍເຫຼືອໃນການປະຕິບັດຄຳຕັດສິນຂອງສານ. ພ້ອມກັນນັ້ນ, ກໍໃຫ້ດຳເນີນມາດຕະການ ແລະ ປະຕິບັດລະບຽບວິໄນ ຢ່າງທັນການຕໍ່ຜູ້ລະເມີດ. ຂັດຂວາງໃຊ້ສິດອຳນາດທີ່ບໍ່ຖືກຕ້ອງ ຫຼື ນາບຂູ່ການປະຕິບັດຄຳຕັດສິນຂອງສານ.

10) ໃຫ້ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ເອົາໃຈໃສ່ສ້າງເງື່ອນໄຂສະດວກໃຫ້ແກ່ການເຄື່ອນໄຫວປະຕິບັດໜ້າທີ່ ຂອງອົງການປະຕິບັດຄຳຕັດສິນຂອງສານ ຢູ່ຂັ້ນຕ່າງໆຢ່າງເໝາະສົມ ເພື່ອຮັບປະກັນການເຄື່ອນໄຫວວຽກ

ງານຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງເຊັ່ນ: ການຈັດຫາຫ້ອງການເຮັດວຽກ, ງົບປະມານ, ພາຫະນະ, ວັດຖຸ ອຸປະກອນເຕັກນິກອັນຈຳເປັນ ແລະ ອື່ນໆ ໃຫ້ແກ່ການເຄື່ອນໄຫວປະຕິບັດຄຳຕັດສີນຂອງສານ.

**3.ສາເຫດທີ່ພາໃຫ້ຄຳຕັດສີນຂອງສານຄົງຄ້າງ ແລະ ບໍ່ສາມາດປະຕິບັດໄດ້ເພີ່ມຈຳນວນຂຶ້ນໃນທຸກປີ**

ຄຳຕັດສີນທີ່ຄົງຄ້າງ ແລະ ບໍ່ສາມາດປະຕິບັດໄດ້ເພີ່ມຈຳນວນຂຶ້ນໃນທຸກປີ, ສັງລວມບັນຫາໄດ້ດັ່ງນີ້:

- ຜູ້ຖືກປະຕິບັດຄຳຕັດສີນບໍ່ຍອມຮັບ ຫຼືບໍ່ພໍໃຈຕໍ່ຄຳຕັດສີນຂອງສານ;
- ຜູ້ຖືກປະຕິບັດຄຳຕັດສີນຂອງສານ ບໍ່ເຂົ້າມາຕາມໝາຍຮຽກຂອງຫ້ອງການ, ໜ່ວຍງານ;
- ຜູ້ຖືກປະຕິບັດຄຳຕັດສີນດື້ດ້ານ ຫຼືບຫຼີກບໍ່ຍອມປະຕິບັດຄຳຕັດສີນ;
- ຄຳຕັດສີນໃຊ້ໄດ້ຢ່າງເດັດຂາດແລ້ວ ແຕ່ຈັດຕັ້ງປະຕິບັດຍາກ;
- ຄຳຕັດສີນຂອງສານມີເນື້ອໃນປະຕິບັດບໍ່ຈະແຈ້ງ;
- ຫຼາຍພາກສ່ວນຍັງຮັບຄຳຮ້ອງ ຂອງຜູ້ຖືກປະຕິບັດຄຳຕັດສີນໄປຄົ້ນຄວ້າ, ບັນຫາດຽວຮັບໄປ ຄົ້ນຄ້ວາຫຼາຍເທື່ອ ໃນເມື່ອອົງການດັ່ງກ່າວຮັບແລ້ວ ຜູ້ຖືກປະຕິບັດຄຳຕັດສີນນຳມາເປັນຂໍ້ອ້າງວ່າ ບໍ່ເຫັນດີປະຕິບັດເພາະຍັງຍື່ນຄຳຮ້ອງຢູ່;
- ຄະດີດຽວຫຼາຍພາກສ່ວນມີຄຳເຫັນບໍ່ຄືກັນ, ມີຄຳເຫັນລົບໄປລົບມາ, ສະເໜີໃຫ້ກວດກາຫຼາຍເທື່ອ, ທວງສຳນວນຄະດີໄປກວດກາຫຼາຍເທື່ອ;
- ຄະດີດຽວມີການພິພາກສາຂັ້ນນຕິດຕາມຫຼາຍເທື່ອ ລົບໄປລົບມາ, ຄະດີບາງເລື່ອງຈັດຕັ້ງປະຕິບັສິ້ນສຸດ ແລະ ອອກຄຳສັ່ງປິດສຳນວນຄະດີແລ້ວ ພັດນຳມາຕັດສີນຄືນໃໝ່ທີ່ກົງກັນຂ້າມກັບສິ່ງທີ່ໄດ້ປະຕິບັດຜ່ານມາ;
- ການປະຕິບັດຄຳຕັດສີນທີ່ມີການຍົກຍ້າຍຫຼາຍຄອບຄົວ;
- ຜູ້ຖືກປະຕິບັດຄຳຕັດສີນທຸກຍາກ ບໍ່ມີຄວາມສາມາດປະຕິບັດ;
- ບໍ່ຮູ້ທີ່ຢູ່ຂອງຜູ້ຖືກປະຕິບັດຄຳຕັດສີນ;
- ຜູ້ຖືກປະຕິບັດຄຳຕັດສີນເປັນຄົນຕ່າງປະເທດ ແລະ ໄດ້ກັບຄືນປະເທດຂອງຜູ້ກ່ຽວແລ້ວ;
- ຜູ້ຖືກປະຕິບັດຄຳຕັດສີນພວມປະຕິບັດໂທດຢູ່ຄ້າຍຄຸມຂັງຫຼາຍປີ;
- ຄຳຕັດສີນທີ່ຜູ້ເສຍຄະດີ ແລະ ຜູ້ຖືກປະຕິບັດບໍ່ຍອມເສຍຄ່າອາກອນຂອງລັດ.

ໃນການປະຕິບັດຄຳຕັດສີນຂອງສານ ບໍ່ແມ່ນຜູ້ໃດຜູ້ໜຶ່ງ ຫຼື ອົງການຈັດຕັ້ງໃດໜຶ່ງເຮັດໄດ້ພຽງຜູ້ດຽວ, ມັນແມ່ນວຽກງານ, ເປັນໜ້າທີ່ຂອງທຸກການຈັດຕັ້ງ ແລະ ພົນລະເມືອງທຸກຄົນທີ່ຈະຕ້ອງມີສ່ວນຮ່ວມ, ທັງໃຫ້ການຮ່ວມໄມ້ຮ່ວມມື ແລະ ອຳນວຍຄວາມສະດວກໃນທຸກດ້ານ, ທຸກເງື່ອນໄຂ ຈຶ່ງຈະເຮັດໃຫ້ວຽກງານການສຶກສາອົບຮົມສະຕິກົດໝາຍ, ຈັດຕັ້ງປະຕິບັດ ແລະ ກວດກາການປະຕິກົດໝາຍ ເຊິ່ງເປັນເນື້ອໃນສຳຄັນຂອງການປະຕິບັດໃຫ້ໄດ້ຮັບຜົນດີ ແລະ ມີປະສິດທິພາບສູງ. ຖ້າວ່າທຸກຄົນ, ທຸກອົງການຈັດຕັ້ງຫາກບໍ່ເຫັນພາລະບົດບາດ ແລະ ຄວາມສຳຄັນ ຂອງວຽກງານນີ້ ແລ້ວ ກໍຈະເຮັດໃຫ້ວຽກງານດັ່ງກ່າວບໍ່ໄດ້ຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ໄດ້ກຳນົດໄວ້ ກໍຄືເຮັດໃຫ້ແນວທາງນະໂຍບາຍຂອງພັກລັດບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ.[1]

**4.ດ້ານລະບຽບການ**

[1] 26 ປີແຫ່ງການປະຕິບັດຄຳຕັດສີນຂອງສານ ພາຍໃຕ້ລັດຖະທຳມະນູນ ແລະ ກົດໝາຍ

ການປະຕິບັດຄຳຕັດສິນຂອງສານ ຈະຖືກດຳເນີນຕາມລະບຽບການ, ຈຳເປັນຕ້ອງປະຕິບັດຕາມຂໍ້ກຳນົດຂອງກົດໝາຍ ເປັນຕົ້ນແມ່ນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການໃນການປະຕິບັດຄຳຕັດສິນຄະດີແພ່ງ, ຄະດີອາຍາ ກ່ຽວກັບຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຣິບຊັບ ຫຼື ວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະຫຼະພາບ ເພື່ອເຮັດໃຫ້ຄຳຕັດສິນຂອງສານໄດ້ຮັບການປະຕິບັດຢ່າງເຂັ້ມງວດ, ຖືກຕ້ອງ, ວ່ອງໄວ ແລະ ເປັນເອກະພາບ ແນໃສ່ເພີ່ມທະວີຄວາມສັກສິດຂອງອຳນາດລັດ ແລະ ຂອງກົດໝາຍ, ປົກປ້ອງສິດ, ຜົນປະໂຫຍດຂອງລັດ, ສິດຜົນປະໂຫຍດອັນຊອບທຳ ຂອງບຸກຄົນ, ລວມໝູ່, ການຈັດຕັ້ງ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ.

ນອກຈາກລະບຽບການທີ່ໄດ້ກ່າວມາຂ້າງເທິງນັ້ນ ວຽກງານປະຕິບັດຄຳຕັດສິນຂອງສານ ຢູ່ແຕ່ລະຂັ້ນແຕ່ລະທ້ອງຖິ່ນ ຕ້ອງໄດ້ເອົາໃຈໃສ່ເປັນພິເສດຕໍ່ກັບຄຸນສົມບັດຈັນຍາບັນຂອງພະນັກງານປະຕິບັດຄຳຕັດສິນຂອງສານ, ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ແລະ ກໍ່ສ້າງບຳລຸງຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານໃນອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານຢ່າງເປັນລະບົບຕໍ່ເນື່ອງ.

ກະຊວງຍຸຕິທຳ, ພະແນກຍຸຕິທຳຕ້ອງວາງແຜນການ ເພື່ອນຳເອົາກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານໄປໂຄສະນາສຶກສາອົບຮົມໃຫ້ສັງຄົມ ແລະ ປະຊາຊົນຮັບຮູ້ ແລະ ເຊື່ອມຊຶມ, ໂດຍສະເພາະຜູ້ທີ່ມີສ່ວນກ່ຽວຂ້ອງໃນການປະຕິບັດຄຳຕັດສິນຂອງສານ. ນອກຈາກນັ້ນ, ກໍມອບຄວາມຮັບຜິດຊອບຢ່າງຂາດຕົວໃຫ້ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ຫົວໜ້າຫ້ອງການປະຕິບັດຄຳຕັດສິນຂອງສານ ແລະ ໜ່ວຍງານປະຕິບັດຄຳຕັດສິນຂອງສານ ລາຍງານຕໍ່ກັບໝາກຜົນ ແລະ ຂໍ້ຂາດຕົກບົກຜ່ອງຂອງການຄຸ້ມຄອງກໍຄືການປະຕິບັດຄຳຕັດສິນຂອງສານ ເພື່ອຊອກວິທີປັບປຸງແກ້ໄຂໃຫ້ດີຂຶ້ນໃນຕໍ່ໜ້າ.

**References:**

1. ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008;
2. ດຳລັດເລກທີ 158/ລບ, ລົງວັນທີ 4 ມິຖຸນາ 2013 ວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
3. ຄຳສັ່ງເລກທີ 38/ນຍ, ລົງວັນທີ 06/11/2006 ກ່ຽວກັບການປະຕິບັດຄຳຕັດສິນຂອງສານ